# ທາງເລືອກ ໃນ ການດູແລ ຜູ້ຊຣາ (Options in Aged Care)

ການບໍຣິການ ດູແລຜູ້ຊຣາ ມີຫລາຍປະເພດ, ແຕ່ການທີ່ຈະຣູ້ວ່າ ປະເພດໃດ ເໝາະສົມ ສຳຫລັບ ທ່ານ ແລະ ຄົນໃນຄອບຄົວຂອງທ່ານ ອາດຈະບໍ່ງ່າຍ. ມູນຂ່າວນີ້ຈະໃຫ້ຄວາມກະຈ່າງແຈ້ງ ກ່ຽວກັບ ທາງເລືອກ ການບໍຣິການດູແລຜູ້ຊຣາ ແລະ ວິທີການ ທີ່ທ່ານຈະໄດ້ເຂົ້າຊົມໃຊ້ແບບໃດ. ໃນນີ້ກໍມີ ເລກ ໂທຣະສັບ ທີ່ຈະເປັນປໂຍດແກ່ທ່ານ. ມັນຈະອະທິບາຍ ກ່ຽວກັບ ການບໍຣິການດູແລຜູ້ຊຣາ ສາມແບບ ທີ່ຣັຖບານໄດ້ໃຫ້ທຶນຊ່ວຍເຫລືອ.

- **ການດູແລ ໃນຊຸມຊົນ (Community Care)**
- **ການດູແລ ຊົ່ວຄາວ (Respite Care)**
- **ການດູແລ ໃນສຳນັກຜູ້ຊຣາ (Residential Care)**

ເຖິງວ່າທ່ານອາດຈະຍັງບໍ່ຕ້ອງການ ການບໍຣິການນີ້ເທື່ອກໍຕາມ ມັນກໍສຳຄັນທີ່ທ່ານຄວນຮູ້ໄວ້ວ່າ ມີບໍຣິການຫຍັງແດ່ ເພື່ອທ່ານຈະໄດ້ວາງແຜນໄວ້ ເມື່ອທ່ານຕ້ອງການ ການດູແລໃນອະນາຄົດ.

## ການດູແລ ໃນຊຸມຊົນ (Community Care)

ຜູ້ເຖົ້າສ່ວນຫລາຍແມ່ນມັກຢູ່ເຮືອນຂອງຕົນເອງໄປຕລອດ, ແຕ່ວ່າ ຫາກບໍ່ມີຜູ້ຊ່ວຍເຫລືອ ຜູ້ເຖົ້າບາງຄົນ ກໍຣູ້ສຶກວ່າ ມີຄວາມລຳບາກ. ມີບໍຣິການດູແລ ຫລາຍຊນິດທີ່ຊ່ອຍເຫລືອຜູ້ເຖົ້າ ໃຫ້ຢູ່ເຮືອນຕົນເອງໄປຕລອດ. ການດູແລແບບນີ້ ເປັນທີ່ຣູ້ກັນວ່າການດູແລ ໃນຊຸມຊົນ(Community Care) ແລະ ມັນກໍມີ ສີ່ປະເພດ ໃຫ້ເລືອກຕາມຄວາມຕ້ອງການຂອງທ່ານ.

### ກ/- ການດູແລ ໃນເຮືອນ ແລະ ໃນຊຸມຊົນ (Home and Community Care - HACC)

ການດູແລໃນເຮືອນ ແລະ ໃນຊຸມຊົນນີ້ ແມ່ນໃຫ້ບໍຣິການຊ່ວຍເຫລືອອູ້ມຊູ ຜູ້ເຖົ້າທີ່ຊຸດໂຊມ, ທີ່ມີຄວາມລຳບາກ ໃນການຢູ່ກິນປະຈຳວັນ, ແຕ່ວ່າຍັງຕ້ອງການ ຢາກຢູ່ໃນເຮືອນຂອງຕົນເອງໄປຕລອດ ຢ່າງມີອິສຣະພາບ. ມີບໍຣິການຫລາຍຢ່າງ ນັບທັງ: ການຊ່ອຍພຍາບານ ແລະ ບໍຣິການສຸຂພາບ ພັນທະມິດ, ການບົວຣະບັດຕົນໂຕ (ຊ່ອຍອາບນ້ຳ, ນຸ່ງເຄື່ອງ ແລະ ກິນອາຫານ), ສົ່ງອາຫານ ແລະ ບໍຣິການ ອາຫານອື່ນໆ, ຊ່ອຍໃນເຮືອນຊານ (ຊ່ອຍເຮັດວຽກເຮືອນ, ຊັກເຄື່ອງ ແລະ ພາໄປຕລາດ), ດັດແປງ ແລະ ສ້ອມແປງ ເຮືອນ, ສເນີນຳສົ່ງ ແລະ ປຶກສາອົບລົມ ແລະ ອູ້ມຊູດ້ານສວັດດີການ. ການດູແລ ໃນເຮືອນ ແລະ ໃນຊຸມຊົນນີ້ ແມ່ນຣັຖບານທ້ອງຖິ່ນ, ສູນຮັກສາສຸຂພາບຊຸມຊົນ ແລະ ອົງການຊຸມຊົນ ເປັນຜູ້ຊ່ວຍເຫລືອ.

### ຂ/- ການດູແລ ຜູ້ຊຣາໃນຊຸມຊົນ ແບບເປັນຊຸດ (Community Aged Care Packages - CACP)

ການດູແລ ຜູ້ຊຣາໃນຊຸມຊົນ ແບບເປັນຊຸດນີ້ ແມ່ນໃຫ້ບໍຣິການຊ່ອຍເຫລືອ ພວກຜູ້ເຖົ້າຊຸດໂຊມ ທີ່ຕ້ອງການ ດູແລແບບ ສັບຊ້ອນ ຫລືຜູ້ຕ້ອງການ ການດູແລຫລາຍຢ່າງ ເພື່ອຊ່ອຍໃຫ້ພວກເພິ່ນໄດ້ຢູ່ໃນເຮືອນ ຂອງຕົນເອງຕລອດໄປ. ການຊ່ອຍ ເຫລືອແບບເປັນຊຸດນີ້ ປັບງ່າຍ ແລະ ດັດແປງໃຫ້ຖືກຕາມຄວາມຕ້ອງການ ຂອງແຕ່ລະບຸກຄົນໄດ້ ແລະ ໃນນັ້ນອາດ ມີທັງ: ການບົວຣະບັດຕົນໂຕ (ຊ່ອຍອາບນ້ຳ, ນຸ່ງເຄື່ອງ ແລະ ກິນອາຫານ), ຊ່ອຍແຕ່ງອາຫານ, ຊ່ອຍໃນເຮືອນຊານ, (ຊ່ອຍເຮັດວຽກເຮືອນ, ຊັກເຄື່ອງ ແລະ ພາໄປ ຕລາດ), ເຮັດສວນ, ສເນີນຳສົ່ງ ອູ້ມຊູ ດ້ານສວັດດີການ. ການບໍຣິການ ນີ້ ແມ່ນ ອົງການບໍຣິການດູແລ ທີ່ມີໃບປະກາດ ເປັນຜູ້ວາງແຜນ ແລະ ປະສານງານ.
ຜູ້ທີ່ເໝາະສົມເຂົ້າໃຊ້ ບໍຣິການ ຊີເອຊີພີ (CACP) ນີ້ ຕ້ອງແມ່ນຄນະສຳພາດປະເມີນຜົນ (Aged Care Assessment Team) ເປັນຜູ້ຕັດສິນ.

### ຄ/- ການດູແລ ຜູ້ຊຣາໃນເຮືອນ ແບບສົມບູນ (Extended Aged Care at Home Packages - EACH)

ການດູແລ ຜູ້ຊຣາໃນເຮືອນ ແບບສົມບູນນີ້ ແມ່ນການໃຫ້ບໍຣິການ ຜູ້ທີ່ຕ້ອງການຄວາມຊ່ອຍເຫລືອ ຫລາຍກວ່າ ພວກ ຊີເອຊີພີ (CACP) ຈະໃຫ້ໄດ້. ການບໍຣິການນີ້ ປ່ຽນງ່າຍ ແລະ ດັດແປງໃຫ້ຖືກຕາມ ຄວາມຕ້ອງການ ຂອງແຕ່ ລະບຸກຄົນໄດ້ ແລະອາດມີທັງ: ການຊ່ອຍພຍາບານ ແລະ ບໍຣິການສຸຂພາບ ພັນທະມິດ, ການບົວຣະບັດຕົນໂຕ (ຊ່ອຍ ອາບນ້ຳ, ນຸ່ງເຄື່ອງ ແລະ ກິນອາຫານ), ຊ່ອຍໃນເຮືອນຊານ (ຊ່ອຍເຮັດວຽກເຮືອນ, ຊັກເຄື່ອງ ແລະ ພາໄປຕລາດ) ສເນີນຳສິ່ງ ແລະ ອູ້ມຊູ ດ້ານສວັດດີການ. ການບໍຣິການນີ້ ແມ່ນ ອົງການບໍຣິການດູແລ ທີ່ມີໃບປະກາດ ເປັນຜູ້ວາງ ແຜນ ແລະ ປະສານງານ. ຜູ້ທີ່ເໝາະສົມເຂົ້າໃຊ້ ບໍຣິການ ອີເອຊີເຫຈ (EACH) ນີ້ ຕ້ອງແມ່ນ ຄນະສຳພາດປະເມີນ ຜົນ (Aged Care Assessment Team) ເປັນຜູ້ຕັດສິນ.

### ງ/- ການດູແລຜູ້ຊຣາ ທີ່ມີຄວາມຈຳເຊື່ອມໃນເຮືອນ ແບບສົມບູນ (Extended Aged Care at Home Dementia - EACH D)

ການດູແລຜູ້ຊຣາ ທີ່ມີຄວາມຈຳເຊື່ອມໃນເຮືອນ ແບບສົມບູນ ແມ່ນບໍຣິການ ຜູ້ມີຄວາມຈຳເຊື່ອມ. ການບໍຣິການ ນີ້ ປັບງ່າຍ ແລະ ດັດແປງໃຫ້ຖືກຕາມ ຄວາມຕ້ອງການຂອງ ແຕ່ລະບຸກຄົນໄດ້ ແລະ ອາດມີທັງ: ການຊ່ອຍພຍາບານ ແລະ ບໍຣິການສຸຂພາບ ພັນທະມິດ, ການບົວຣະບັດຕົນໂຕ (ຊ່ອຍອາບນ້ຳ, ນຸ່ງເຄື່ອງ ແລະ ກິນອາຫານ), ຊ່ອຍໃນ ເຮືອນຊານ (ຊ່ອຍເຮັດວຽກເຮືອນ, ຊັກເຄື່ອງ ແລະ ພາໄປຕລາດ) ສເນີນຳສິ່ງ ແລະ ອູ້ມຊູ ດ້ານສວັດດີການ. ການ ບໍຣິການນີ້ ແມ່ນ ອົງການບໍຣິການດູແລ ທີ່ມີ ໃບປະກາດ ເປັນຜູ້ວາງແຜນ ແລະ ປະສານງານ. ຜູ້ທີ່ເໝາະສົມເຂົ້າໃຊ້ ບໍຣິການ ອີເອຊີເຫຈດີ (EACH D) ນີ້ ຕ້ອງແມ່ນຄນະສຳພາດປະເມີນຜົນ (Aged Care Assessment Team) ເປັນຜູ້ຕັດສິນ.

ຫາກຕ້ອງການມູນຂ່າວເພີ້ມເຕີມ ກ່ຽວກັບການດູແລຊຸມຊົນ ແລະ ການຊອກຫາບໍຣິການ ທີ່ເໝາະສົມ ສຳລັບ ຄວາມ ຕ້ອງການ ຂອງທ່ານ ກະຣຸນາ ໂທຫາ ຄຳມັນແວວຟ ແຄລິງ ເຊັນເຕີ້ (Commonwealth Carelink Centre) ເລກໂທ: 1800 052 222.

## ການດູແລ ຊົ່ວຄາວ (Respite Care)

ແຣສໄປ້ທແຄ ແມ່ນການດູແລຊົ່ວຄາວ ໃຫ້ຜູ້ຊຣາແລະ ຜູ້ບົວຣະບັດ ໄດ້ ພັກຜ່ອນ ຈາກພາລະ ປະຈຳວັນ ຂອງເຂົາ ເຈົ້າ. ຜູ້ຊຣາຫລາຍຄົນ ໄດ້ຖືກບົວຣະບັດ ຢູ່ໃນເຮືອນ ໂດຍສະມາຊິກຄອບຄົວ. ມັນເປັນການສຳຄັນ ທີ່ຜູ້ບົວຣະບັດ ໄດ້ຮັບການອູ້ມຊູ ໃນໜ້າທີ່ອັນມີຄ່າຂອງເຂົາ, ໂດຍສເພາະແລ້ວ ຜູ້ບົວຣະບັດ ຫລາຍຄົນເອງ ກໍແມ່ນ ຜູ້ເຖົ້າ. ແຣສໄປ້ທແຄ ອູ້ມຊູ ຜູ້ບົວຣະບັດ ໃຫ້ໄດ້ພັກຜ່ອນ ຈາກໜ້າທີ່ ບົວຣະບັດ ຂອງ ເຂົາເຈົ້າ, ໃນຂນະດຽວກັນ ກໍຊ່ອຍ ໃຫ້ຜູ້ຊຣາ ໄດ້ຢູ່ໃນເຮືອນ ໄປຕລອດ. ແຣສໄປ້ທແຄ ໃຫ້ບໍຣິການດູແລ ຜູ້ຊຣາ ໃນຣະຍະ ຊົ່ວຄາວ ເພື່ອໃຫ້ຜູ້ບົວຣະບັດ ໄດ້ພັກຜ່ອນ, ໄດ້ໄປເຮັດໜ້າທີ່ອື່ນ (ເຊັ່ນ ໄປຕລາດ) ຫລື ໄປທ່ຽວ ຮໍລີເດ. ກ່ອນຈະໃຊ້ ບໍຣິການນີ້ ສ່ວນມາກ ກໍຕ້ອງ ໄດ້ວາງແຜນໄວ້ລ່ວງໜ້າກ່ອນ, ແຕ່ບາງເທື່ອ ກໍສາມາດກະກຽມໃນຣະຍະສຸກເສີນໄດ້ (ເຊັ່ນ: ເວລາຜູ້ບົວຣະບັດ ບໍ່ສະບາຍ). ຜູ້ຊຣາຢູ່ຜູ້ດຽວ ເວລາຮູ້ສຶກ ບໍ່ສາມາດ ຈະດູແລຕົນເອງໄດ້ ແລະ ຕ້ອງການພັກຜ່ອນ ກໍສາມາດໃຊ້ ແຣສໄປ້ທແຄໄດ້. ແຣສໄປ້ທແຄນີ້ ສາມາດບໍຣິການ ຢູ່ເຮືອນຂອງຜູ້ຊຣາເອງ, ຢູ່ ເດແຄເຊັນເຕີ້ ຫລື ຢູ່ສູນດູແລຜູ້ຊຣາ. ອົງການ ທີ່ ມີ ແຣສໄປ້ທແຄ ແມ່ນ ໂຮມ ແອັນດ ຄັອມມິວນິທີ ແຄ (HACC) , ແນຊັນໂນ ແຣສໄປ້ທ ຟໍ ແຄເຣີ້ ໂປຣແກຣມ (NRCP), ແລະ ແຣຊີເດັນໂຊແຄ (Residential Care). ຜູ້ໃດຈະໄດ້ເຂົ້າໃຊ້ບໍຣິການນີ້ ແມ່ນຂຶ້ນກັບ ສະຖານະການ, ບຸຣິມະສິດ ແລະ ຄວາມຈຳເປັນ ຂອງ ບຸກຄົນນັ້ນ.

ຫາກຕ້ອງການມູນຂ່າວເພີ້ມເຕີມ ກ່ຽວກັບແຣສໄປ້ທແຄ ແລະ ບໍຣິການຊ່ອຍເຫລືອອື່ນໆ ສຳລັບ ຜູ້ບົວຣະບັດ ກະຣຸນາ ໂທຫາ ຄຳມັນແວວຟ ແຄເຣີ້ສ ແຣສໄປ້ທ ເຊັນເຕີ້ (Commonwealth Carers' Respite Centre) ເລກໂທ: 1800 059 059.

## ການດູແລ ໃນສຳນັກຜູ້ຊຣາ (Residential Care)

ເມື່ອລະດັບສຸຂພາບຂອງຜູ້ຊຣາ ຊຸດໂຊມຫລາຍຂຶ້ນ, ການທີ່ຈະເລືອກຢູ່ບ້ານຂອງຕົນເອງໄປຕລອດ ອາດຈະເປັນໄປບໍ່ໄດ້ ແລະ ສະນັ້ນ ຄວນຈະພິຈາຣະນາ ເອົ້າໄປຢູ່ໃນສຳນັກດູແລຜູ້ຊຣາ. ສຳນັກດູແລຜູ້ຊຣາ ເປັນທີ່ຮູ້ກັນທົ່ວໄປວ່າ ເຣຊິເດັນໂຊ ແຄ (Residential Care). ສຳນັກດູແລຜູ້ຊຣານີ້ ມີສອງປະເພດ: ປະເພດດູແລ ຂັ້ນຕ່ຳ ແລະ ປະເພດດູແລ ຂັ້ນສູງ. ການດູແລທັງ ສອງປະເພດນີ້ ໃຫ້ບໍຣິການຊ່ອຍເຫລືອ ຫລາຍຢ່າງ ຕາມທີ່ຣະບຸໄວ້, ນັບທັງ: ບ່ອນຢູ່, ເຄື່ອງເຮືອນ, ຊັກເຄື່ອງ, ທຳຄວາມສະອາດ, ອາຫານ ແລະ ເຄື່ອງດື່ມ, ມີພະນັກງານຊ່ວຍຕລອດເວລາ, ການບົວຣະບັດຕົນໂຕ (ຊ່ອຍອາບນ້ຳ, ນຸ່ງເຄື່ອງ ແລະ ກິນອາຫານ), ການພຍາບານ ເປັນຄັ້ງຄາວ ແລະ ກິຈກັມສັງຄົມ. ການດູແລ ຂັ້ນສູງ ແມ່ນສຳລັບ ຜູ້ຊຸດໂຊມຫລາຍ, ຕ້ອງການຄວາມຊ່ອຍເຫລືອ 24 ຊົ່ວໂມງ ແລະ ດູແລພຍາບານປະຈຳ. ສູນດູແລຜູ້ຊຣາ ບາງບ່ອນ ມີທັງການດູແລ ຂັ້ນຕ່ຳ ແລະ ຂັ້ນສູງ, ເພື່ອໃຫ້ເອົາເຈົ້າໄດ້ຢູ່ບ່ອນດຽວຕໍ່ໄປ ເຖິງແມ່ນວ່າ ສະພາບ ຂອງເອົາເຈົ້າຈະປ່ຽນແປງກໍຕາມ. ນີ້ເປັນທີ່ຮູ້ກັນທົ່ວໄປວ່າ "ເຖົ້າກັບທີ່" (ageing in place). ສຳນັກບໍຣິການດູແລນີ້ ແມ່ນ ອີງການບໍຣິການດູແລ ທີ່ມີໃບປະກາດ ເປັນຜູ້ບໍຣິຫານ. ຜູ້ທີ່ເໝາະສົມເອົ້າໃຊ້ ບໍຣິການນີ້ ຕ້ອງແມ່ນຄນະສຳພາດປະເມີນຜົນ (Aged Care Assessment Team) ເປັນຜູ້ຕັດສິນ.

ຫາກຕ້ອງການມູນຂ່າວເພີ້ມເຕີມ ກ່ຽວກັບ ເຣຊິເດັນໂຊ ແຄ ແລະ ການຊອກຫາບໍຣິການທີ່ເໝາະສົມ ສຳລັບ ຄວາມຕ້ອງການ ຂອງທ່ານ ກະຣຸນາ ໂທຫາ ຄໍາມັນແວວຟ ແຄລິງ ເຊັນເຕີ້ (Commonwealth Carelink Centre ) ເລກໂທ:1800 052 222 ຫລື ເອຈແຄ ອິນຟໍເມຊັນ ລາຍນ (Age Care Information Line) ເລກໂທ:1800 500 853.

## ມູນຂ່າວ ເພີ້ມເຕີມ

**ຄນະສຳພາດປະເມີນຜົນ (Aged Care Assessment Team - ACAT)**

ກ່ອນຈະເອົ້າຊົມໃຊ້ ບໍຣິການດູແລຜູ້ຊຣາ ທີ່ໄດ້ຮັບທຶນຣັຖບານຊ່ອຍນັ້ນ, ຂັ້ນທຳອິດ ຄນະສຳພາດປະເມີນຜົນ (ACAT) ຕ້ອງໄດ້ປະເມີນເບິ່ງກ່ອນ. ການໄດ້ຮັບສິດຊົມໃຊ້ ບໍຣິການດູແລຜູ້ຊຣາ ແບບເປັນຊຸດ (CACP), ການດູແລຜູ້ຊຣາ ໃນເຮືອນ ແບບສົມບ60 (EACH), ແລະ ການດູແລ ໃນສຳນັກຜູ້ຊຣາ (Residential care) ຕ້ອງແມ່ນການ ປະ ເມີນຂອງຄນະສຳພາດປະເມີນຜົນ ເປັນຜູ້ຕັດສິນ, ຊຶ່ງ ການປະເມີນນັ້ນ ຈະອີງໃສ່ ຄວາມຈຳເປັນ ຂອງຜູ້ຢາກໃຊ້. ການປະເມີນນັ້ນ ກໍ່ເປັນຄວາມລັບ ແລະ ບໍ່ໄດ້ເສັຽຄ່າ, ແລະ ການປະເມີນກໍບໍ່ເປັນຕາຢ້ານ ຄືອາດໄດ້ຍິນຄົນເວົ້າມາ. ຜູ້ຕາງຫນ້າ ACAT (ປົກຕິ ກໍ ແມ່ນ ນາຍໝໍ, ນາງໝໍ, ພນັກງານສວັດດີການ ຫລື ຜູ້ຊ່ຽວຊານ ດ້ານສຸຂພາບ ອື່ນໆ) ຈະປະເມີນ ສະຖານະການ ແລະ ຄວາມຕ້ອງການສເພາະ ຂອງທ່ານ. ເພິ່ນຈະບອກໃຫ້ທ່ານຮູ້ວ່າ ທ່ານ ມີສິດ ຊົມໃຊ້ ບໍຣິການ ປະເພດໃດແດ່ ແລະ ວິທີທາງ ຊອກຫາ ບໍຣິການ ທີ່ເໝາະສົມ ກັບສະພາບຂອງທ່ານ. ໃນຂນະ ທີ່ປະເມີນຢູ່ນັ້ນ ທ່ານຈະໃຫ້ພີ່ນ້ອງ ຫລື ໝູ່ຄູ່ ຜູ້ໃດຜູ້ນຶ່ງ ຢູ່ນຳກໍໄດ້. ທ່ານກໍຍັງມີສິດບອກ ACAT ຫາ ນາຍພາສາ ໃຫ້ທ່ານໄດ້. ຫາກທ່ານ ບໍ່ພໍໃຈ ກັບ ຜົນຂອງການປະເມີນ, ທ່ານ ມີສິດ ຮ້ອງຂໍ ອຸທອນ ໄດ້. ຖ້າທ່ານຢາກໃຫ້ ACAT ມາປະເມີນ ໃຫ້ຂໍຫນັງສື ສເນີນຳສົ່ງ ຈາກທ່ານໝໍ ຂອງທ່ານ ຫລືບໍ່ ກໍ ໂທຫາ ຄໍາມັນແວວຟ ແຄລິງ ເຊັນເຕີ້ (Commonwealth Carelink Centre) ເລກໂທ: 1800 052 222.

**ຄ່າທຳນຽມ ແລະ ຄ່າບໍຣິການ**

ຄ່າຈ່າຍໃນການຊົມໃຊ້ ບໍຣິການດູແລຜູ້ຊຣາ ຂອງຄົນໃດຄົນນຶ່ງ ແມ່ນຂຶ້ນກັບຜົນຂອງການປະເມີນ ແລະ ຄວາມສາມາດ ຈ່າຍຂອງເຂົາ. ຜູ້ໃດຫາກມີບັນຫາ ທາງດ້ານເງິນຄຳ ກໍຈະໄດ້ຮັບການພິຈາຣະນາ ພິເສດ. ສິ່ງສຳຄັນ ທີ່ທ່ານຄວນຮູ້ກໍແມ່ນວ່າ ເຖິງແມ່ນທ່ານຈະ ບໍ່ສາມາດຈ່າຍ ຄ່າບໍຣິການ ກໍຕາມ, ທ່ານ ກໍຍັງຈະໄດ້ຮັບບໍຣິການຢູ່. ໃຜຈະຈ່າຍໄດ້ສຳໃດ ຫລືບໍ່ກໍຕາມ ເຂົາເຈົ້າກໍຈະໄດ້ຮັບ ການດູແລ ອັນມີຄຸນນະພາບ ເທົ່າທຽມກັນ. ຖ້າຢາກຮູ້ ລາຍລະອຽດຕື່ມ ກ່ຽວກັບ ຄ່າທຳນຽມ ແລະ ການຈ່າຍຄ່າບໍຣິການ ໃຫ້ຕິດຕໍ່ຫາ ເອຈ ແອນ ຄອມມິວນິທີ ແຄ ອິນຟໍເມຊັນ ລາຍນ (Aged and Community Care Information Line) ເລກໂທ: 1800 500 853.

**ສິດ ແລະ ໜ້າທີ່ ຂອງທ່ານ**

ບັນດາຜູ້ໃຫ້ບໍຣິການ ຈຳເປັນຕ້ອງບອກທ່ານ ວ່າ ທ່ານມີສິດ ແລະໜ້າທີ່ແນວໃດ ກ່ຽວກັບການບໍຣິການ ທີ່ທ່ານກຳລັງຈະຊົມໃຊ້. ທ່ານຈະໄດ້ບໍຣິການຈາກ ສຳນັກຜູ້ຊຣາ ຫລື ການດູແລໃນຊຸມຊົນ ກໍຕາມ, ມັນ ເປັນສິ່ງສຳຄັນທີ່ທ່ານຄວນຮູ້ຈັກ ສິດ ຂອງທ່ານ, ຊຶ່ງນັບທັງສິດໃນການ:

- ບອກວ່າ ທ່ານມີສິດ ຫຍັງແດ່;
- ພົວພັນ ແລະ ບອກເລົ່າ ໃນການຕັດສິນ ທຸກຢ່າງ ທີ່ກ່ຽວຂ້ອງກັບການດູແລ ຂອງທ່ານ;
- ເປັນເຈົ້າການຊີວິດຂອງທ່ານ, ເງິນຄຳຂອງທ່ານ ແລະ ສົມບັດຂອງທ່ານ;
- ໄດ້ຮັບຄວາມມີກຽດ ແລະ ຄວາມນັບຖື;
- ສືບຕໍ່ປະຕິບັດ ກິຈກັມສັງຄົມ ຫລື ສາສນາ ແລະ ເກັບກຳນຳໃຊ້ ພາສາ ທີ່ທ່ານມັກ ໂດຍປາສຈາກການຮັກບັງຊັງບໍ່ຮຽງ;
- ໄດ້ຮັບການດູແລ ອັນດີມີຄຸນນະພາບ ເໝາະສົມກັບສະພາວະການ ຂອງທ່ານ;
- ຮ້ອງທຸກ ແລະ ທຳການແກ້ໄຂບັນຫາ ທີ່ເກີດຂຶ້ນ;
- ຄວາມລັບສ່ວນຕົວ (privacy).

ຫາກຕ້ອງການມູນຂ່າວເພີ້ມເຕີມ ກ່ຽວກັບ ສິດ ແລະ ຫນ້າທີ່ ຂອງທ່ານ ດ້ານບໍຣິການດູແລຜູ້ຊຣາ ກະຣຸນາ ໂທຫາ ແນຊັນໂນ ເອຈດ ແຄ ແອດໂວຂະຊີ ລາຍນ (National Aged Care Advocacy Line) ເລກໂທ 1800 700 600

**ຂໍ້ຂ້ອງໃຈ ແລະ ການຮ້ອງທຸກ**

ຖ້າທ່ານມີຂໍ້ຂ້ອງໃຈ ຫລື ຄຳຮ້ອງທຸກ ກ່ຽວກັບຄຸນນະພາບຂອງການດູແລ ຫລື ການບໍຣິການ ທີ່ທ່ານ ໄດ້ຮັບ, ທ່ານຄວນໂອ້ລົມນຳ ຫົວໜ້າບໍຣິຫານ ການດູແລຜູ້ຊຣາ. ຖ້າບໍ່ຢາກເຮັດແບບນີ້, ຫລື ຫາກວ່າ ທ່ານ ບໍ່ດີໃຈ ນຳວິທີແກ້ໄຂຄຳຮ້ອງທຸກ ຂອງທ່ານ, ທ່ານຈະຕິດຕໍ່ ໄປຫາ ອົງການ ໄຕ່ສວນ ຄຳຮ້ອງທຸກ ກ່ຽວກັບ ການດູແລຜູ້ຊຣາ ກໍໄດ້, ໃຊ້ເລກໂທ: 1800 550 552. ບໍຣິການນີ້ ຟຣີ ແລະ ກໍເປັນຄວາມລັບ.

## ເລກໂທຣະສັບ ອັນເປັນປະໂຍດ

ຖ້າທ່ານຕ້ອງການນາຍພາສາ ຊ່ອຍທ່ານ ລົມທາງໂທຣະສັບ, ໃຫ້ໂທຫາ ກອງບໍຣິການ ແປພາສາ ທແຣນສເລດຕິງ ແອນດ ອິນເທີແປຣຄຕິງ ເຊີວິສ (Translating and Interpreting Service) ເລກໂທ:1314 50. ນີ້ ແມ່ນບໍຣິການຟຣີ.

ໃຫ້ເຂົ້າໃຈວ່າເວລາໂທໄປຫາ ເລກໂທຣະສັບທີ່ຂຶ້ນຕົ້ນດ້ວຍ 1800 ບໍ່ເສັຽເງິນ, ເວັ້ນແຕ່ວ່າ ທ່ານໃຊ້ມືຖື ໂທ.

**ອົງການ ໄຕ່ສວນ ຄຳຮ້ອງທຸກ ກ່ຽວກັບ ການດູແລ ຜູ້ຊຣາ (Aged Care Complaints Investigation Scheme) ເລກໂທ: 1800 550 552**
ໜ້າທີ່ ຂອງອົງການ ໄຕ່ສວນຄຳຮ້ອງທຸກ ກ່ຽວກັບ ການດູແລຜູ້ຊຣາ ແມ່ນ ໄຕ່ສວນ ຂໍ້ຂ້ອງໃຈ ແລະ ຄຳຮ້ອງທຸກ ທີ່ມີຕໍ່ ການບໍຣິການດູແລຜູ້ຊຣາ ທີ່ຣັຖບານ ອອກທຶນຊ່ອຍເຫລືອ, ຊຶ່ງນັບທັງ ການດູແລໃນຊຸມຊົນ, ການດູແລຊົ່ວຄາວ, ແລະ ການດູແລໃນສຳນັກຜູ້ຊຣາ. ຖ້າທ່ານມີຂໍ້ຂ້ອງໃຈ ຫລື ຄຳຮ້ອງທຸກ ກ່ຽວກັບ ການບໍຣິການ ຂອງທ່ານ ໃຫ້ຕິດຕໍ່ຫາ ອົງການ ໄຕ່ສວນຄຳຮ້ອງທຸກ ກ່ຽວກັບການດູແລ ຜູ້ຊຣາ. ທ່ານຈະຮ້ອງທຸກໄປ ໂດຍບໍ່ບອກຊື່ກໍໄດ້. ບໍຣິການອັນນີ້ ຟຣີ.

**ກອງມູນຂ່າວ ການດູແລຜູ້ຊຣາ (Aged Care Information Line) ເລກໂທ: 1800 500 853**
ກອງມູນຂ່າວ ການດູແລຜູ້ຊຣາ ສນອງ ມູນຂ່າວກ່ຽວກັບ ການບໍຣິການດູແລຜູ້ຊຣາ, ນັບທັງ ມູນຂ່າວກ່ຽວກັບ ຄ່າທຳນຽມ ແລະ ຄ່າບໍຣິການ, ການກວດລາຍໄດ້ ແລະ ການ ຊ່ອຍເຫລືອ ດ້ານເງິນຄຳ.

**ເຊັນເຕີ້ລິງ - ຄວາມພິການ, ການເຈັບປ່ວຍ ແລະ ຜູ້ບົວຣະບັດ (Centrelink-Disability, Sickness and Carers) ເລກໂທ: 13 27 17**
ຖ້າທ່ານມີຄຳຖາມກ່ຽວກັບຄວາມພິການ, ການເຈັບປ່ວຍ ແລະ ຜູ້ບົວຣະບັດ ໃຫ້ໂທ ເລກນີ້, ນັບທັງ ເບັ້ຽລ້ຽງຄົນພິການ, ເງິນຊ່ວຍການເຄື່ອນຍ້າຍ, ເງິນຄ່າຈ້າງ ຜູ້ດູແ, ເງິນພິເສດໃຫ້ຜູ້ດູແລ), ແລະ ເງິນຊ່ວຍຍາມເຈັບປ່ວຍ.

**ໂທ ເຊັນເຕີ້ລິງ- ນາໆພາສາ (Multilingual Call) ເລກໂທ: 13 12 02**
ຖ້າຢາກລົມນຳພະນັກງານ ເຊັນເຕີ້ລິງ ຜູ້ປາກພາສາຂອງທ່ານໄດ້ ໃຫ້ໂທ ເລກນີ້.

**ເຊັນເຕີ້ລິງ-ບໍຣິການເບັ້ຽບຳນານ (Retirement Services) ເລກໂທ: 13 23 00**
ຖ້າທ່ານມີຄຳຖາມ ກ່ຽວກັບເບັ້ຽບຳນານໃຫ້ໂທເລກນີ້, ນັບທັງ ບຳນານຊຣາ, ບັດຫລຸດຣາຄາ ຜູ້ກິນເບັ້ຽບຳນານ, ບັດແຮວແຄຄາດ ຄົມມັນແວວ ສຳຫລັບ ຜູ້ອາວຸໂສ, ແລະ ຄຳຖາມກ່ຽວກັບ ການປະເມີນ ລາຍໄດ້ ເພື່ອຢາກຮູ້ຄ່າຈ່າຍ ບໍຣິການ ການດູແລຜູ້ຊຣາ. ທ່ານຈະໂທ ເລກນີ້ ກໍໄດ້ ເພື່ອຊົມໃຊ້ ກອງບໍຣິການ ມູນຂ່າວດ້ານເງິນຄຳ ຂອງ ເຊັນເຕີ້ລິງ. ຊຶ່ງ ໃຫ້ບໍຣິການ ຟຣີ ແລະ ເປັນເອກະລາດ ແກ່ທຸກຄົນໃນຊຸມຊົນ (ເຖິງແມ່ນວ່າທ່ານ ຈະບໍ່ໄດ້ກິນເບັ້ຽບຳນານ ຫລື ບໍ່ໄດ້ຮັບ ເງິນຊ່ອຍເຫລືອອັນໃດ ກໍຕາມ).

**ສູນຂ່າວສານ ຂອງ ຣັຖບານກາງ ສຳຫລັບ ຜູ້ດູແລ (Commonwealth Carelink Centre)**

**ເລກໂທ: 1800 052 222**

ສູນຂ່າວສານ ຂອງ ຣັຖບານກາງ ສຳຫລັບ ຜູ້ດູແລ ແມ່ນ ໃຫ້ມູນຂ່າວທຸກຢ່າງ ກ່ຽວກັບ ການດູແລ ຜູ້ຊຣາ ຢູ່ ຈຸດດຽວ. ຖ້າຢາກຮູ້ວ່າ ໃນທ້ອງຖິ່ນ ຂອງທ່ານ ຫລື ຢູ່ແຫ່ງໃດໆ ໃນ ອອສເຕຣເລັຽ ມີບໍຣິການ ດູແລຜູ້ຊຣາ ຊນິດໃດ, ນັບທັງ ມູນຂ່າວ ກ່ຽວກັບ ຄ່າບໍຣິການ, ວິທີການສຳພາດປະເມີນ ແລະ ຫລັກຕັດສິນ ສິດທິຊົມໃຊ້ ໃຫ້ຕິດຕໍ່ຫາ ສູນຂ່າວສານ ຂອງ ຣັຖບານກາງ ສຳຫລັບ ຜູ້ດູແລ. ບໍຣິການອັນນີ້ ຟຣີ ແລະ ກໍເປັນຄວາມລັບ.

**ສູນພັກຊົ່ວຄາວ ຂອງຣັຖບານກາງ ສຳຫລັບ ຜູ້ດູແລ (Commonwealth Carers' Respite Centre)**

**ເລກໂທ: 1800 059 059**

ສູນພັກຊົ່ວຄາວ ຂອງຣັຖບານກາງ ສຳຫລັບ ຜູ້ດູແລ ປະສານງານ ການເປີດໂອກາດ ໃຫ້ລົບຊົມໃຊ້ ບໍຣິການພັກຜ່ອນ ຊົ່ວຄາວ ໃນທ້ອງຖິ່ນຂອງທ່ານ, ໃຫ້ມູນຂ່າວ ແລະ ຄຳແນະນຳ ກ່ຽວກັບ ທາງເລືອກ ການພັກຜ່ອນ, ຊ່ອຍ ແກ້ໄຂ ກໍຣະນີ ສຸກເສີນ ຫລື ຈັດສັນການພັກຜ່ອນ ຕາມແຜນທີ່ໄດ້ວາງໄວ້, ແລະ ຊ່ອຍຈ່າຍຄ່າ ການພັກຜ່ອນຣະຍະສັ້ນ ຫລື ຍາມສຸກເສີນ. ບໍຣິການນີ້ ມີ ຕລອດ 24 ຊົ່ວໂມງ.

**ສາຍໂທ ບໍຣິການຕາງໜ້າ ດູແລຜູ້ຊຣາ ແຫ່ງຊາດ (National Aged Care Advocacy Line)**

**ເລກໂທ: 1800 700 600**

ຖ້າທ່ານຢາກຮູ້ວ່າມີ ບໍຣິການຕາງໜ້າຢູ່ທ້ອງຖິ່ນຂອງທ່ານ ຫລືບໍ່ ໃຫ້ໂທຫາ ສາຍໂທ ບໍຣິການຕາງໜ້າ ດູແລຜູ້ຊຣາ ແຫ່ງຊາດ. ບໍຣິການຕາງໜ້ານີ້ ຊ່ອຍສົ່ງເສີມ ສິດທິຂອງທ່ານ ໃນການຊົມໃຊ້ບໍຣິການ ດູແລຜູ້ຊຣາ ແລະ ອາດເຮັດໃຫ້ ທ່ານ ມີການພົວພັນຕື່ມຂຶ້ນ ໃນຂັ້ນຕອນຕັດສິນ ບັນຫາຂອງທ່ານ. ບໍຣິການນີ້ ອາດມີບົດບາດສຳຄັນ ໃນການອູ້ມຊູທ່ານ ຕອນດຳເນີນການຮ້ອງທຸກ ແລະ ແນະນຳໃຫ້ທ່ານ ຮູ້ສິດທິ ຂອງທ່ານ ຕອນເຈຣະຈາ ກັບບັນດາ ຜູ້ໃຫ້ບໍຣິການດູແລ ທັງຫລາຍ. ບໍຣິການນີ້ ຟຣີ ແລະ ກໍເປັນຄວາມລັບ.

**ສູນໂທຣະສັບແຫ່ງຊາດ ກ່ຽວກັບ ຄວາມຈຳເຊື່ອມ (National Dementia Helpline)**

**ເລກໂທ: 1800 100 500**

ສູນໂທຣະສັບແຫ່ງຊາດ ກ່ຽວກັບ ຄວາມຈຳເຊື່ອມ ແມ່ນບໍຣິການຊ່ອຍເຫລືອ ທາງໂທຣະສັບ ແຫ່ງຊາດ ຕລອດ 24 ຊົ່ວໂມງ ບໍຣິຫານ ໂດຍ ອາວຊາຍເມີ ອອສເຕຣເລັຽ (Alzheimer's Australia). ມັນ ໃຫ້ ຄວາມຊ່ອຍເຫລືອ, ມູນຂ່າວ ແລະ ຄຳແນະນຳ ທີ່ໃຊ້ໄດ້, ພ້ອມທັງ ມູນຂ່າວ ກ່ຽວກັບ ບໍຣິການຕ່າງໆ ທີ່ ທາງ ອາວຊາຍເມີ ອອສເຕຣເລັຽ ມີໃຫ້. ບໍຣິການນີ້ ຟຣີ ແລະ ກໍເປັນຄວາມລັບ.

ມູນຂ່າວເຫລົ່ານີ້ ແມ່ນ ຣິບໂຣມ ໂດຍ ສູນຊຣາ ນາໆ ວັທນະທັມ 2008. (Centre for Cultural Diversity in Ageing 2008).